# ALIFOLATE

**Generic name：** Folic acid tablets

**Brand Name：** ALIFOLATE

**Composition:** Folic acid.............................0.4mg

**Indications：**

- Prevention of congenital neural tube malformations in fetuses.
- Dietary Supplement for pregnant and lactating women.

**Dosage：**

- Women of childbearing age who planning pregnancy until at least three months after pregnancy. 1 tablet per day.
- Lactating women: 1 tablet per day.

**Contraindications：**

- Patients who are allergic to this product.
- Megaloblastic anemia caused by vitamin $B_{12}$ deficiency cannot be treated with folic acid alone.

**Warning:**

- Oral administration of large doses of folic acid can affect the absorption of zinc.
- High doses of folic acid can antagonize the anti-epileptic effects of phenobarbital, phenytoin sodium, and propafenone.
- During the use of this product, please consult a doctor if taking multivitamins or other health supplements containing folic acid.

**Adverse Effects:**

- Adverse reactions are rare. Long term use may cause gastrointestinal disorders such as anorexia, nausea, and bloating. Large doses of folic acid may darken urine.

**Dosage form：** Light yellow tablets.

**Expiry date**: 24 months from the date of manufacture.

**Packaging:** 10 Tablets/blister, 20 blisters/box.

**Storage:**

- Keep in original packaging in a dark dry place.
- Keep out of reach of children.

**Manufactured by:**

Laos Alliance Pharmaceutical Group Factory
Saysettha Development Zone, Vientiane Capital, Lao PDR
Tel: +856-21-737 051
www.alliancepharmagroup.com

# ເອກະສານກຳກັບຢາ
# ALIFOLATE

**ຊື່ທົ່ວໄປ:** Folic acid tablets

**ຊື່ຜະລິດຕະພັນ:** ALIFOLATE

**ສ່ວນປະກອບ:** Folic acid.................................0.4mg

**ຂໍ້ບົ່ງໃຊ້:**

ການຂາດ Folic acid ເປັນສາເຫດໃຫ້ ເປັນພະຍາດເລືອດຈາງ ແລະ ພັດທະນາໄປສູ່ການຜິດປົກກະຕິ ຂອງລະບົບປະສາດ ຂອງເດັກໃນທ້ອງໄດ້, ຈຶ່ງນຳໃຊ້ໃນກໍລະນີດັ່ງນີ້:

- ໃຊ້ໃນແມ່ຍິງຖືພາ ເພື່ອປ້ອງກັນ ອາການຜິດປົກກະຕິທາງປະສາດ ຂອງເດັກໃນທ້ອງ.
- ໃຊ້ປ້ອງກັນພະຍາດເລືອດຈາງ ໃນແມ່ຍິງຖືພາ ແລະ ແມ່ຍິງທີ່ລ້ຽງລູກດ້ວຍນ້ຳນົມແມ່.

**ວິທີໃຊ້:**

ໃຊ້ຕາມການແນະນຳຂອງແພດ

- ໃຊ້ໃນແມ່ຍິງຖືພາ ເພື່ອປ້ອງກັນ ການຜິດປົກກະຕິຂອງລະບົບປະສາດຂອງເດັກໃນທ້ອງ: ເລີ່ມໃຫ້ກິນ ຕັ້ງແຕ່ການວາງແຜນຖືພາ ຈົນໄປຮອດ ເດັກໃນທ້ອງມີອາຍຸ 3 ເດືອນ ໃຊ້ໃນປະລິມານ 1 ເມັດ ຕໍ່ຄັ້ງ ກິນ ວັນລະຄັ້ງ.
- ໃຊ້ໃນແມ່ຍິງທີ່ກຳລັງລ້ຽງລູກດ້ວຍນ້ຳນົມ.
- ແມ່ ປ້ອງກັນ ອາການເລືອດຈາງ ແລະໃນແມ່ຍິງຖືພາ, ໃຊ້ກິນວັນລະເມັດ ແລະ ໃຊ້ວັນລະຄັ້ງ.

**ຂໍ້ຫ້າມໃຊ້:**

- ຫ້າມໃຊ້ໃຊ້ຜູ້ແພ້ຢານີ້, ຄວນແຈ້ງໃຫ້ແພດຊາບກ່ອນການນຳໃຊ້ຢາ ໃນກໍລະນີ ມີບັນຫາທາງດ້ານ ສຸຂະພາບເພື່ອແພດຈະໄດ້ປັບປະລິມານນຳໃຊ້ທີ່ເຫມາະສົມເພື່ອບໍ່ໃຫ້ເກີດອັນຕະລາຍເຊັ່ນ: ເປັນ ພະຍາດກ່ຽວກັບໄຂ່ຫລັງ ຫລືຢູ່ໄລຍະການຟອກໄຂ່ຫລັງ, ເປັນພະຍາດເລືອດຈາງ ຈາກການຕິດ ເຊື້ອ.
- ການປິ່ນປົວພະຍາດເລືອດຈາງ ບໍ່ສາມາດທົດແທນສະພາບການຂາດ ວິຕາມິນ B12 ໄດ້ ດັ່ງນັ້ນ ຄົນເຈັບຄວນໄດ້ຮັບຢາ ຕາມແພດກຳນົດຢ່າງຖືກຕ້ອງ ໂດຍບໍ່ຄວນຢຸດໃຊ້ຢາຕົວໃດຕົວຫນຶ່ງ.

**ຄຳເຕືອນ:**

- ການນຳໃຊ້ Folic acid ໃນປະລິມານເກີນຄວາມຈຳເປັນສາມາດເຮັດໃຫ້ການດູດຊຶມບາງສານເຄມີ ໃນຮ່າງກາຍມີບັນຫາໄດ້ເຊັ່ນ: ສານສັງກະສີ (Zinc).
- ການໃຫ້ປະລິມານ Folic acid ສູງ ສາມາດເປັນຜົນປະຕິປັກ ຕໍ່ຢາຕ້ານບ້າຫມູໄດ້ໃນບາງກຸ່ມເຊັ່ນ: Phenobarbital, Phenytoin sodium, and Propafenone.
- ພະຍາດເລືອດຈາງສ່ວນໃຫຍ່ຈະຕາມມາດ້ວຍ ການຂາດສານເກືອແຮ່ ແລະ ວິຕາມິນຕ່າງໆດັ່ງນັ້ນ ຄວນມີການບຳລຸງ ທາງໂພສະນາການຢ່າງຕໍ່ເນື່ອງຕື່ມເຊັ່ນ: ທາດເຫລັກ, ໂປຕີນ, ບັນດາ ວິຕາມິນ ກຸ່ມB ເປັນຕົ້ນ.

**ຜົນຂ້າງຄຽງ:**

- ຜົນຂ້າງຄຽງໃນການນຳໃຊ້ບໍ່ຄ່ອຍພົບ, ແຕ່ການນຳໃຊ້ຢາ ເປັນເວລານານ ແລະເກີນປະລິມານ ຈະພົບເຫັນອາການເຫລົ່ານີ້ເຊັ່ນ: ຮູ້ສຶກມຶນຊາ ຫລື ຄັນຕາມຮ່າງກາຍ, ເຈັບປວດບໍລິເວນປາກ ແລະ ລີ້ນ, ບໍ່ມີແຮງ, ສັບສົນມຶນງົງ, ກະວົນກະວາຍ, ບໍ່ມີສະມາທິ, ມີອາການຜິດປົກກະຕິທາງກະ ເພາະລຳໄສ້, ປັດສະວະປ່ຽນສີ.

**ຮູບແບບຢາ::** ຢາເມັດສີເຫຼືອງອ່ອນ.

**ວັນຫມົດອາຍຸ** : 24 ເດືອນ ນັບຈາກວັນທີຜະລິດ.

**ຂະຫນາດບັນຈຸ:** ບັນຈຸໃນກັບ, 1 ກັບມີ 20 ແຜງ, 1 ແຜງມີ 10 ເມັດ.

**ການເກັບຮັກສາ:**

- ເກັບຮັກສາໃນກັບກ່ອງເດີມປິດໃຫ້ສະນິດ ປ້ອງກັນບໍ່ໃຫ້ຖືກແສງແດດໂດຍກົງ.
- ເກັບຮັກສາຢາ ຫ່າງໄກຈາກມືເດັກ.

**ຜະລິດໂດຍ**:

ໂຮງງານຜະລິດຢາ ລາວພັນທະມິດ ຟາກມາ ກຣຸບ ຈຳກັດ

ສະຖານທີ່: ຕັ້ງຢູ່ເຂດ ພັດທະນາກວມລວມ ໄຊເສດຖາ, ນະຄອນຫຼວງວຽງຈັນ, ສປປ ລາວ

**ໂທລະສັບ**: +856-21-737 051
www.alliancepharmagroup.com